# ຂໍ້ແນະນຳ

# ການຈັດຕັ້ງປະຕິບັດການລົງທຶນກຸ່ມຜະລິດຊາວກະສິກອນຮອບທີ II

ພຶດສະພາ 2023

# ພາກສະເໜີ

ຄູ່ມືສະບັບນີ້ມີລາຍລະອຽດຂອງຂັ້ນຕອນສໍາລັບການກະກຽມ, ອະນຸມັດ ແລະ ຈັດຕັ້ງປະຕິບັດການລົງທຶນກຸ່ມພາຍໃຕ້ທຶນກຸ່ມການຜະລິດຂອງໂຄງການ ຊກຂ (ກອງທຶນກຸ່ມການຜະລິດ). ເປັນຄູ່ມືທີ່ພັດທະນາມາຈາກຄູ່ມືຂອງໂຄງການທີ່ສະໜັບສະໜູນໂດຍ ອົງການກອງທຶນສາກົນເພື່ອການພັດທະນາກະສິກໍາ (IFAD) ໂດຍສະເພາະແມ່ນການລົງທຶນກຸ່ມຜະລິດດ້ານພື້ນຖານໂຄງລ່າງຂະໜາດນ້ອຍ ແລະ ການຜະລິດກະສິກໍາ, ວິທີການນໍາໃຊ້ໃນໂຄງການຊົນລະກະເສດແມ່ນໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າ (ຊກຂ) ຂັ້ນສູນກາງ, ທີມງານຈັດຕັງປະຕິບັດຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອເປັນບ່ອນອີງໃນການນໍາພາກຸ່ມຜະລິດ ບ້ານເປົ້າໝາຍໃນການຈັດຕັ້ງປະຕິບັດການລົງທຶນກຸ່ມຜະລິດໃຫ້ກາຍເປັນສິນຄ້າ ໂດຍສະເພາະແມ່ນການຂະຫຍາຍສະມາຊິກກຸ່ມ ແລະ ໃຫ້ທຶນແກ່ກຸ່ມຜະລິດຮອບທີສອງ ໃນບ້ານທີ່ໄດ້ຮັບທຶນແລ້ວຮອບທີໜຶ່ງ ທີ່ໄດ້ຜ່ານການປະເມີນການຈັດຕັ້ງປະຕິບັດປະສົບຜົນສໍາເລັດ.

ຄູ່ມືກອງທຶນກຸ່ມການຜະລິດແມ່ນອອກແບບເພື່ອຮັບໃຊ້ສະເພາະໂຄງການຊົນລະກເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ(ຊກຂ) ໃນການສະໜັບສະໜູນການລົງທຶນໃຫ້ແກ່ກຸ່ມຜະລິດບ້ານເປົ້າໝາຍ, ໃນຫ້ອງການປະສານງານສູນກາງ, ທີມງານຈັດຕັ້ງປະຕິບັດຂັ້ນແຂວງ, ທີມງານສະໜັບສະໜູນການລົງທຶນກຸ່ມການຜະລິດເມືອງ ແລະ ບັນດາຫ້ອງການຂັ້ນເມືອງ ແລະ ພະແນກຂັ້ນແຂວງທີ່ກ່ຽວຂ້ອງ. ຄູ່ມືດັ່ງກ່າວສະໜອງລາຍລະອຽດໃນການກໍານົດກິດຈະກໍາການລົງທຶນຂະຫຍາຍສະມາຊິກ ແລະ ການສະໜັບສະໜູນທຶນຮອບທີສອງ, ມາດຖານເງື່ອນໄຂເຂົ້າເປັນສະມາຊິກຮອບສອງ, ຜູ້ທີ່ມີເງື່ອນໄຂຮັບສະໝັກທຶນຮອບສອງ, ໄດ້ຮັບການສະໜັບສະໜູນຂະບວນການສະໝັກທຶນ, ຂະບວນການການປະເມີນ, ການເງິນ ແລະ ຂະບວນການຕິດຕາມ. ແຕ່ລະລາຍລະອຽດແມ່ນຢູ່ເອກະສານ ແລະ ແບບຟອມລະອຽດຂ້າງລຸ່ມນີ້.

**ສາລະບານ**


| | |
|---|---|
| I. ຈຸດປະສົງ | 4 |
| II. ການປະເມີນການຈັດຕັ້ງປະຕິບັດ | 4 |
| III. ການກະກຽມແຜນຂໍທຶນຂອງກຸ່ມຜະລິດ | 4 |
| 1. ການເພີ້ມສະມາຊິກກຸ່ມຜະລິດ | 4 |
| 2. ມາດຖານເງື່ອນໄຂຜູ້ຈະເປັນສະມາຊິກ | 4 |
| 3. ຂະໜາດທຶນຂອງກຸ່ມຜະລິດ: | 4 |
| 4. ກິດຈະກຳ | 5 |
| 5. ໄລຍະເວລາໃນການປະຕິບັດ | 6 |
| IV. ວິທີການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດ. | 6 |
| 1. ການຝຶກອົບຮົມໃຫ້ແກ່ທີມງານຂັ້ນເມືອງ | 6 |
| 2. ການຈັດກອງປະຊຸມຂັ້ນບ້ານ | 6 |
| 4. ການດຳເນີນການຂຽນແຜນຂໍທຶນ | 7 |
| V. ການຍື່ນບົດສະເໜີຂໍທຶນກຸ່ມຜະລິດ | 7 |
| VI. ການເຊັນສັນຍາສະໜອງທຶນ ລະຫວ່າງກຸ່ມຜະລິດ ແລະ ຄະນະພັດທະນາເສດຖະກິດ-ສັງຄົມເມືອງ | 9 |
| VII. ຂັ້ນຕອນການເບີກຈ່າຍດ້ານງົບປະມານ | 9 |
| VIII. ຝຶກອົບຮົມການຈັດຕັ້ງປະຕິບັດ. | 9 |
| IX. ການຈັດຕັ້ງປະຕິບັດ | 10 |
| 1. ການຈັດຊື້ | 10 |
| 2. ການຈັດຕັ້ງປະຕິບັດ | 10 |
| X. ການຕິດຕາມ ແລະ ປະເມີນຜົນ | 10 |
| ເອກະສານຊ້ອນທ້າຍ | 12 |
| 1. ແບບຟອມບົດບັນທຶກກອງປະຊຸມບ້ານ | 12 |
| 2. ແບບຟອມບັນຊີລາຍຊື່ຂອງ | 12 |
| 3. ແບບຟອມບົດສະເໜີຂໍທຶນປັດໃຈການຜະລິດ | 12 |
| 4. ແບບຟອມຮ່າງສັນຍາລະຫວ່າງຄະນະເສດຖະກິດເມືອງ ແລະ ກຸ່ມຜະລິດ ພາສາລາວ | 12 |
| 5. ແບບຟອມຮ່າງສັນຍາລະຫວ່າງຄະນະເສດຖະກິດເມືອງ ແລະ ກຸ່ມຜະລິດ ພາສາອັງກິດ | 12 |
| 6. ແບບຟອມກວດກາ ແລະ ທົບທວນບົດສະເໜີ ປັດໃຈການຜະລິດ | 12 |

## I. ຈຸດປະສົງ

- ເພື່ອສະໜອງທຶນໃຫ້ແກ່ກຸ່ມຜະລິດຮອບທີສອງ, ສໍາລັບການຜະລິດເປັນສິນຄ້າ ເພື່ອສືບຕໍ່, ຍົກລະດັບສິນຄ້າທາງດ້ານປະລິມານ ແລະ ຄຸນນະພາບ ຂອງການຜະລິດໃນຮອບທີໜຶ່ງ ຂອງຄອບຄົວສະມາຊິກກຸ່ມເປົ້າໝາຍໂຄງການ.

## II. ການປະເມີນການຈັດຕັ້ງປະຕິບັດ

ບ້ານທີ່ຈະໄດ້ຮັບທຶນໃນຮອບຕໍ່ໄປ ແມ່ນຈະໄດ້ຜ່ານການປະເມີນການຈັດຕັ້ງປະຕິບັດທຶນຮອບທີໜຶ່ງເສຍກ່ອນໂດຍສະເພາະແມ່ນບ້ານທີ່ໄດ້ຮັບທຶນຮອບໜຶ່ງ ບ້ານເປົ້າໝາຍ, ຖ້າວ່າບ້ານດັ່ງກ່າວໄດ້ຜ່ານການປະເມີນຄົບຕາມເງື່ອນໄຂ ຈຶ່ງຈະໄດ້ທຶນໃນຮອບຕໍ່ໄປ, ແຕ່ຖ້າບ້ານທີ່ມີການປະເມີນບໍ່ຜ່ານ ແມ່ນຈະຖືກປະຕິເສດ ຫລື ຈະບໍ່ໄດ້ຮັບທຶນໃນຮອບຕໍ່ໄປ (ລາຍລະອຽດການປະເມີນແມ່ນມີແບບ ຟອມຄັດຕິດ)

## III. ການກະກຽມແຜນຂໍທຶນຂອງກຸ່ມຜະລິດ

### 1. ການເພີ່ມສະມາຊິກກຸ່ມຜະລິດ

- ການປະຕິບັດແຜນການຂໍທຶນຮອບທີ່ສອງ ແມ່ນປະຕິບັດໃນບ້ານ ຫລື ກຸ່ມທີ່ໄດ້ຮັບການສະໜັບສະໜູນໃນຮອບທີໜຶ່ງ ທີ່ໄດ້ຜ່ານການປະເມີນຜົນການຈັດຕັ້ງປະຕິບັດສໍາເລັດ.
- ການກະກຽມແຜນຂໍທຶນໃກ້ແກ່ກຸ່ມຜະລິດຊາວກະສິກອນຮອບທີສອງ ແມ່ນຈະບໍ່ມີການສ້າງຕັ້ງກຸ່ມໃໝ່, ການເປີດບັນຊີໃໝ່ ແມ່ນຈະນໍາໃຊ້ເອກະສານສ້າງຕັ້ງກຸ່ມເກົ່າ, ບັນຊີເກົ່າທີ່ໄດ້ກະກຽມແລ້ວໃນຮອບທີ ໜຶ່ງ.
- ຄະນະບໍລິຫານກຸ່ມ: ສໍາລັບກຸ່ມທີ່ມີຄວາມຈໍາເປັນໃນການປ່ຽນຄະນະບໍລິຫານກຸ່ມກໍ່ສາມາດປ່ຽນໄດ້ ແຕ່ຖ້າປ່ຽນຄະນະບໍລິຫານກຸ່ມກໍ່ຕ້ອງປ່ຽນລະບົບບັນຊີ ແລະ ຂະບວນການຖອດເງິນຕ່າງໆ(ຕາມລະບຽບການສ້າງຕັ້ງກຸ່ມ).

### 2. ມາດຖານເງື່ອນໄຂຜູ້ຈະເປັນສະມາຊິກ

- ເປັນຄົວເຮືອນທີ່ມີທີ່ຢູ່ອາໃສຖາວອນໃນບ້ານເປົ້າໝາຍ, ມີສິດເທົ່າທຽມກັນລະຫວ່າງຍິງ-ຊາຍ, ຜົວ ແລະ ເມຍ
- ເປັນຄົວເຮືອນທຸກຍາກພາຍໃນບ້ານ ຕາມດໍາລັດ 348/ລບ.
- ເປັນຄົວເຮືອນທີ່ມີເພດຍິງເປັນຫົວໜ້າຄອບຄົວແມ່ນສະໜັບສະນູນເປັນບຸລິມະສິດ.
- ເປັນຄົວເຮືອນຊົນເຜົ່າສ່ວນນ້ອຍ ແມ່ນສະໜັບສະໜູນເປັນບຸລິມະສິດ.
- ເປັນສະມາຊິກຊາວໜຸ່ມຂອງບ້ານ ແມ່ນສະໜັບສະໜູນເປັນບຸລິມະສິດ.
- ເປັນຄົວເຮືອນທີ່ມີພື້ນທີ່ທໍາການຜະລິດໃນເຂດຊົນລະປະທານ(ໃນກໍລະນີບ້ານທີ່ບໍ່ມີຊົນລະປະທານ ແມ່ນໃຫ້ຄັດເລືອກບ້ານທີ່ມີແຫລ່ງນໍ້າ ຫລື ເງື່ອນໄຂສະໜອງນໍ້າ ໃຫ້ແກ່ພື້ນທີ່ການຜະລິດຂອງກຸ່ມເຊັ່ນ: ແຫລ່ງນໍ້າທີ່ສາມາດໃຊ້ຈັກສູບນໍ້າດ້ວຍໄຟຟ້າແສງຕາເວັນ, ເຈາະນໍ້າບາດານ, ສ້າງອ່າງເກັບນໍ້າ ແລະ ອື່ນໆ).
- ເປັນຄົວເຮືອນທີ່ມີແຮງງານ ແລະ ມີຄວາມພ້ອມໃນການຜະລິດ
- ຈໍານວນສະມາຊິກທີ່ຂໍທຶນຮອບສອງ ແມ່ນສະມາຊິກໃໝ່ ຈໍານວນບໍ່ເກີນ 20 ຄົວເຮືອນ.
- ເປັນກຸ່ມ/ບ້ານ ທີ່ປະສົບຜົນສໍາເລັດໂດຍຜ່ານການປະເມີນ ໃນການປະຕິບັດແຜນການລົງທຶນຮອບທີໜຶ່ງ.

**ໝາຍເຫດ: ຄົວເຮືອນທີ່ຄັດເລືອກເປັນສະມາຊິກກຸ່ມຜະລິດຮອບທີສອງ ຕ້ອງຜ່ານ 5 ມາດຖານ-ເງື່ອນໄຂ ຂຶ້ນໄປ.**

### 3. ການຄັດເລືອກຄົວເຮືອນທີ່ຈະເປັນສະມາຊິກກຸ່ມຜະລິດ

ການຄັດເລືອກຄົວເຮືອນທີ່ຈະມາເປັນສະມາຊິກກຸ່ມຜະລິດຮອບທີສອງ ໂດຍການຄົ້ນຄວ້າພິຈາລະນາຕາມມາດຖານ-ເງື່ອນໄຂ ທີ່ມີຄວາມເໝາະສົມ, ຄົວເຮືອນດັ່ງກ່າວຖືກຕ້ອງຕາມມາດຖານ-ເງື່ອນໄຂ ແມ່ນໃຫ້ຄະແນນດ້ວຍການໝາຍຕິກ(√)ໃສ່ຫ້ອງ(ຜ່ານ), ແຕ່ຖ້າບໍ່ຖືກກັບມາດຖານ-ເງື່ອນໄຂແມ່ນໃຫ້ຄະແນນໝາຍຕິກ(√) ໃສ່ຫ້ອງ(ບໍ່ຜ່ານ).

| ລດ | ມາດຖານ-ເງື່ອນໄຂ | ຜ່ານ | ບໍ່ຜ່ານ |
|---|---|---|---|
| 1 | ເປັນຄົວເຮືອນທີ່ມີທີ່ຢູ່ອາໃສຖາວອນໃນບ້ານເປົ້າໝາຍ ແລະ ມີສິດເທົ່າທຽມກັນລະຫວ່າງຍິງ-ຊາຍ (ຜົວ ແລະ ເມຍ) | | |
| 2 | ເປັນຄົວເຮືອນທຸກຍາກພາຍໃນບ້ານ ຕາມດຳລັດ 348/ລບ. | | |
| 3 | ເປັນຄົວເຮືອນທີ່ມີເພດຍິງເປັນຫົວໜ້າຄອບຄົວແມ່ນສະໜັບສະນູນເປັນບຸລິມະສິດ. | | |
| 4 | ເປັນຄົວເຮືອນຊົນເຜົ່າສ່ວນນ້ອຍ ແມ່ນສະໜັບສະໜູນເປັນບຸລິມະສິດ. | | |
| 5 | ເປັນສະມາຊິກຊາວໜຸ່ມຂອງບ້ານ ແມ່ນສະໜັບສະໜູນເປັນບຸລິມະສິດ. | | |
| 6 | ເປັນຄົວເຮືອນທີ່ມີພື້ນທີ່ທຳການຜະລິດໃນເຂດຊົນລະປະທານ(ໃນກໍລະນີບ້ານທີ່ບໍ່ມີຊົນລະປະທານ ແມ່ນໃຫ້ຄັດເລືອກບ້ານທີ່ມີແຫລ່ງນໍ້າ ຫລື ເງື່ອນໄຂສະໜອງນໍ້າ ໃຫ້ແກ່ພື້ນທີ່ການຜະລິດຂອງກຸ່ມເຊັ່ນ: ແຫລ່ງນໍ້າທີ່ສາມາດໃຊ້ຈັກສູບນໍ້າດ້ວຍໄຟຟ້າແສງຕາເວັນ, ເຈາະນໍ້າບາດານ, ສ້າງອ່າງເກັບນໍ້າ ແລະ ອື່ນໆ). | | |
| 7 | ເປັນຄົວເຮືອນທີ່ມີແຮງງານ ແລະ ມີຄວາມພ້ອມໃນການຜະລິດ | | |
| 8 | ຈຳນວນສະມາຊິກທີ່ຂໍທຶນຮອບສອງ ແມ່ນສະມາຊິກໃໝ່ ຈຳນວນບໍ່ເກີນ 20 ຄົວເຮືອນ. | | |
| 9 | ເປັນກຸ່ມ/ບ້ານ ທີ່ປະສົບຜົນສຳເລັດໂດຍຜ່ານການປະເມີນ ໃນການປະຕິບັດແຜນການລົງທຶນຮອບທີໜຶ່ງ. | | |
| ລວມ | | | |

**ໝາຍເຫດ: ຄົວເຮືອນທີ່ຄັດເລືອກເປັນສະມາຊິກກຸ່ມຜະລິດຮອບທີສອງ ຕ້ອງຜ່ານ 5 ມາດຖານ-ເງື່ອນໄຂ ຂຶ້ນໄປ.**

**3. ຂະໜາດທຶນຂອງກຸ່ມຜະລິດ:**

ຂະໜາດທຶນຂອງກຸ່ມຜະລິດຊາວກະສິກອນ ສຳລັບປັດໃຈການຜະລິດສູງສຸດ 6,750 ໂດລ່າສະຫະລັດ(USD)/ກຸ່ມ, ໂດຍມີການຄິດໄລ່ຕົວຈິງ ຕາມຄວາມຈຳເປັນຂອງກຸ່ມຜະລິດຊາວກະສິກອນ.

**4. ກິດຈະກຳ**

- ເປັນກິດຈະກຳທີ່ຕໍ່ຍອດຈາກກິດຈະກຳຮອບທີໜຶ່ງ ຫລື ເປັນກິດຈະກຳໃໝ່ ຕາມທ່າແຮງຂອງບ້ານກໍ່ໄດ້.
- ເປັນພືດທີ່ມີລາຄາສູງ
- ການປູກຜັກເຮືອນຮົ່ມ
- ເປັນພືດທີ່ຮັບປະກັນວ່າມີຕະຫລາດເກັບຊື້ທີ່ແນ່ນອນ.
- ເປັນກິດຈະກຳທີ່ຄອດຄ່ອງກັບແຜນບ້ານ ແລະ ເມືອງ.
- ເປັນກິດຈະກຳທີ່ບໍ່ມີຜົນກະທົບຕໍ່ສະພາບແວດລ້ອມ ແລະ ສັງຄົມ.
- ເປັນກິດຈະກຳທີ່ໃຊ້ເນື້ອທີ່ໜ້ອຍ.

**ລາຍຈ່າຍທີ່ເໝາະສົມໃນການລົງທຶນດ້ານກະສິກຳ**

- ການຈັດຊື້ແນວພັນປັບປຸງ ແລະ ເບ້ຍພືດປັບປຸງ;
- ການຈັດຊື້ແນວພັນສັດນ້ອຍ ແລະ ລວມທັງຢາວັກຊິນ;
- ການຈັດຊື້ຫົວອາຫານ ແລະ ຝຸ່ນຊີວະພາບໃນການລົງທຶນເບື້ອງຕົ້ນ (ສູງສຸດບໍ່ເກີນ 6 ເດືອນ);
- ການຈັດຊື້ເຄື່ອງມື ແລະ ອຸປະກອນ;
- ອຸປະກອນເຮືອນຮົ່ມ ແລະ ສາງຂະໜາດນ້ອຍເພື່ອເກັບມ້ຽນ ແລະ ຮັກສາຜົນຜະລິດພາຍຫຼັງເກັບກ່ຽວ.
- ການຈັດຊື້ເຄື່ອງກົນຈັກຂະໜາດນ້ອຍ, ເຄື່ອງຈັກການກະເສດສຳລັບການນຳໃຊ້ຮ່ວມກັນໃນກຸ່ມ;

**ລາຍການທີ່ສາມາດໃຊ້ຈ່າຍໄດ້ໃນກໍລະນີພິເສດ:**

- ໃນກໍລະນີ ທີ່ພື້ນທີ່ການຜະລິດຂອງສະມາຊິກບໍ່ມີນ້ຳນຳໃຊ້ເຂົ້າໃນການຜະລິດ ກຸ່ມສາມາດນຳໃຊ້ທຶນດັ່ງກ່າວເພື່ອຈັດຊື້ ວັດສະດຸ (ປ໋ຳນ້ຳ; ທໍ່; ສະປຣິງເກີ ແລະ ອື່ນໆ...) ເພື່ອສະໜອງນ້ຳໃຫ້ແກ່ການຜະລິດໄດ້.

**ລາຍການທີ່ບໍ່ສະໜັບສະໜູນ.:**

- ແນວພັນສັດໃຫ່ຍ (ງົວ ແລະ ຄວາຍ);
- ຢາເຄມີປາບສັດຕູພືດ;
- ສານກະຕຸ້ນການລ້ຽງສັດ ແລະ ການປູກພືດ ທີ່ມີຜົນກະທົບຕໍ່ສິ່ງທີ່ມີຊີວິດ.
- ເຄື່ອງກົນຈັກຂະໜາດໃຫ່ຍທີ່ຕ້ອງການທັກສະ ແລະ ການບຳລຸງຮັກສາສູງສຳລັບແຮງງານ, ວັດສະດຸທີ່ມີໃນທ້ອງຖິ່ນ.

5. **ໄລຍະເວລາໃນການປະຕິບັດ:** ໄລຍະເວລາໃນການປະຕິບັດກິດຈະກຳ ສູງສຸດ 6 ເດືອນ, ຫລັງຈາກໄດ້ຮັບການຝຶກອົບຮົມແລ້ວ.

# IV. ວິທີການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດ.

## 1. ການຝຶກອົບຮົມໃຫ້ແກ່ທີມງານຂັ້ນເມືອງ:

- **ຜູ້ເຂົ້າຮ່ວມຂັ້ນເມືອງ:** ຜູ້ປະສານງານເມືອງ, ພະນັກງານກຸ່ມບ້ານ, ພະນັກງານສົ່ງເສີມ, ວິຊາການປູກຝັງ ແລະ ລ້ຽງສັດ ແລະ ວິຊາການ ຊປທ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- **ຜູ້ເຂົ້າຮ່ວມຂັ້ນແຂວງ:** ຊ່ຽວຊານການລົງທຶນກຸ່ມຜະລິດຂັ້ນແຂວງ, ວິຊາການຂະແໜງ ຊປທ ໂຄງການຂັ້ນແຂວງ ແລະ ວິຊາການຂະແໜງ ຊປທ ແຂວງ
- **ໄລຍະເວລາ:** ໄລຍະເວລາ 1 ວັນ: ໃນການແນະນຳ ຫລື ອົບຮົມແກ່ທີມງານຂັ້ນເມືອງ: (1) ຂັ້ນຕອນການກະກຽມ; (2) ທົບທວນການຂຽນແຜນການລົງທຶນ ແລະ ກະກຽມບົດສະເໜີຂໍທຶນ ແລະ ການຍື່ນສະເໜີ;

## 2. ການຈັດກອງປະຊຸມຂັ້ນບ້ານ, ເຊິ່ງໃຊ້ເວລາ 1 ວັນ

### 2.1 ຜູ້ເຂົ້າຮ່ວມ:

- **ຂັ້ນບ້ານ**: ຈັດກອງປະຊຸມ ພາຍໃຕ້ການເຂົ້າຮ່ວມຂອງຊາວກະສິກອນໝົດບ້ານ ຜູ້ທີ່ມີອາຍຸ 15 ປີຂຶ້ນໄປ ແລະ ລວມທັງສະມາຊິກກຸ່ມ, ໃນກອງປະຊຸມດັ່ງກ່າວຕ້ອງມີຜູ້ຍິງເຂົ້າຮ່ວມໝົດພາຍໃນບ້ານ, ຄອບຄົວທຸກຍາກ ແລະ ຊາວໜຸ່ມ.
- **ຂັ້ນເມືອງ:** ຕາງໜ້າຄະນະຊີ້ນຳຂັ້ນເມືອງ, ຜູ້ປະສານງານເມືອງ, ພະນັກງານສົ່ງເສີມ, ພະນັກງານກຸ່ມບ້ານ, ວິຊາການປູກຝັງ-ລ້ຽງສັດ ແລະ ວິຊາການ ຊປທ ເມືອງ.
- **ຂັ້ນແຂວງ:** (1) ຊ່ຽວຊານການລົງທຶນກຸ່ມຜະລິດ; (2) ວິຊາການປູກຝັງຂະແໜງປູກຝັງ; (3) ວິຊາການລ້ຽງສັດຂະແໜງລ້ຽງສັດ ແລະ (4) ວິຊາການ ຊປທ ຂະແໜງຊົນລະປະທານແຂວງ( ເຂົ້າຮ່ວມບາງບ້ານ ເພື່ອຕິດຕາມຊ່ວຍເຫລືອທີມງານຂັ້ນເມືອງ).

### 2.2 ການດຳເນີນກອງປະຊຸມ

- ພະນັກງານກຸ່ມບ້ານ, ສົ່ງເສີມ ແລະ ທີມງານຂັ້ນເມືອງສະເໜີຕໍ່ຊຸມຊົນເຊັ່ນ:

  (1) ຈຸດປະສົງການປະຊຸມ

  (2) ເຜີຍແຜ່ກ່ຽວກັບໂຄງການເຊັ່ນ: ປະຫວັດຄວາມເປັນມາໂຄງການ, ຈຸດປະສົງໂຄງການ, ນະໂຍ ບາຍໂຄງການ ແລະ ຂັ້ນຕອນການປະຕິບັດໂຄງການໂຄງການ.

(3) ໃນການຊ່ວຍເຫລືອທຶນ, ການຈັດຕັ້ງປະຕິບັດການລົງທຶນ ແລະ ຂັ້ນຕອນການຈັດຕັ້ງກຸ່ມ ແລະ ການປະກອບເອກະສານຄຳຮ້ອງຂໍທຶນຕ່າງໆ;

- ນຳສະເໜີກ່ຽວກັບມາດຖານ-ເງື່ອນໄຂຄົວເຮືອນທີ່ເປັນສະມາຊິກກຸ່ມຜະລິດຮອບທີສອງ.
- ຊາວກະສິກອນປຶກສາຫາລືຈັດລຽງບຸລິມະສິດທີ່ສອດຄ່ອງ ແລະ ຄວາມເປັນໄປໄດ້ໃນການເຂົ້າຮ່ວມຂອງສະມາຊິກໂດຍສະເພາະໂຄງການທີ່ຜະລິດເປັນສິນຄ້າ;
- ຊາວກະສິກອນທີ່ມີຄວາມສົນໃຈສະເໜີ, ໃນນັ້ນຄອບຄົວທຸກຍາກ ແລະ ຜູ້ຍິງທີ່ເປັນຫົວໜ້າຄອບຄົວແມ່ນສົ່ງ ເສີມໃຫ້ເຂົ້າຮ່ວມ(ຍົກເວັ້ນຄອບຄົວທີ່ໄດ້ຮັບຮອບທີ1).
- ບັນທຶກລາຍຊື່ສະມາຊິກ ແລະ ບົດບັນທຶກກອງປະຊຸມ

### 3. ການກະກຽມແຜນຂໍທຶນຂອງກຸ່ມຜະລິດ

- **ຜູ້ເຂົ້າຮ່ວມ ຂັ້ນບ້ານ(ຜູ້ປະຕິບັດ) (1)** ອຳນາດການປົກຄອງບ້ານ; (2) ຫົວໜ້າກຸ່ມ ແລະ ສະມາຊິກກຸ່ມທັງໝົດ
- **ຜູ້ເຂົ້າຮ່ວມຂັ້ນເມືອງ(ຜູ້ສະໜັບສະໜູນ) (1)** ວິຊາການຊົນລະປະທານ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ; (2) ວິຊາການປູກຝັງ ຫລື ລ້ຽງສັດ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ພະນັກງານສົ່ງເສີມ(ໂຄງການ)
- **ຜູ້ເຂົ້າຮ່ວມຂັ້ນແຂວງ(ຜູ້ສະໜັບສະໜູນ) (1)** ວິຊາການຊົນລະປະທານຂະແໜງ ຊປທ ພະແນກກະສິກຳ ແລະ ປ່າໄມ້ແຂວງ; (2) ວິຊາການປູກຝັງ ຫລື ລ້ຽງສັດ ຂະແໜງປູກຝັງ ຫລື ລ້ຽງສັດ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ (3) ຊ່ຽວຊານການລົງທຶນກຸ່ມຜະລິດຂັ້ນແຂວງ.

**ໝາຍເຫດ:** ສຳລັບທີມງານຂັ້ນແຂວງລົງຕິດຕາມຊຸກຍູ້ ແລະ ໃຫ້ການສະໜັບສະໜູນສະເພາະແຕ່ກຸ່ມ ແລະ ເມືອງທີ່ມີຄວາມຈຳເປັນ ແລະ ມີຄວາມຕ້ອງການໃນການສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດ.

### 4. ການດຳເນີນການຂຽນແຜນຂໍທຶນ

(4) ກຸ່ມຜະລິດເປັນເຈົ້າການໃນການຈັດຕັ້ງປະຕິບັດ, ການຕັດສິນໃຈ, ການຄັດເລືອກກິດຈະກຳ, ການກຳນົດປັດໃຈການຜະລິດທີ່ຈຳເປັນ, ການສະໜອງຂໍ້ມູນ ແລະ ກະກຽມບົດສະເໜີຂໍທຶນຂອງກຸ່ມ.

(5) ລົງພົບປະລວມກັບສະມາຊິກກຸ່ມ ທົບທວນກ່ຽວກັບບຸລິມະສິດຄວາມຕ້ອງການຂອງກຸ່ມ.

(6) ເກັບກຳຂໍ້ມູນເຊັ່ນ: ເນື້ອທີ່, ຜູ້ໄດ້ຮັບຜົນປະໂຫຍດ ແລະ ປັດໃຈການຜະລິດທີ່ຈຳເປັນ.

(7) ລົງສຳຫລວດເນື້ອທີ່ໆທຈະທຳການຜະລິດຕົວຈິງ.

(8) ປຶກສາຫາລືກ່ຽວກັບວິທີການປະຕິບັດ ແລະ ການຕະຫລາດ(ບ່ອນຂາຍ, ລາຄາຂາຍ ແລະ ປະລິມານຄວາມຕ້ອງການຂອງຕະຫລາດ) ໂດຍອີງໃສ່ກອງປະຊຸມຫລາຍຝ່າຍ (MSP).

(9) ການວິເຄາະຜົນໄດ້ຮັບຈາກໂຄງການ.

(10) ດຳເນີນການຂຽນຕາມແບບຟອມ

(11) ໃຊ້ເວລາ 3-5 ວັນຕໍ່ກຸ່ມ

(12) ເຊັນຮັບຮອງຈາກກຸ່ມ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## V. ການຍື່ນບົດສະເໜີຂໍທຶນກຸ່ມຜະລິດ

### 1) ການຍື່ນເອກະສານຂໍທຶນກຸ່ມຜະລິດຕ້ອງປະກອບມີ

- ເອກະສານສ້າງຕັ້ງກຸ່ມທີ່ຄົບຖ້ວນ;

- ບົດສະເໜີຂໍທຶນກຸ່ມຜະລິດດ້ານປັດໃຈການຜະລິດ(ທີ່ມີລາຍເຊັນຄົບຖ້ວນ);
- ໃບສະເໜີຂໍອະນຸມັດທຶນໃຫ້ແກ່ກຸ່ມຈາກຂັ້ນເມືອງ ຫາຂັ້ນແຂວງ;
- ໃບສະເໜີຂໍອະນຸມັດທຶນໃຫ້ກຸ່ມຈາກຂັ້ນແຂວງ ຫາໂຄງການຂັ້ນສູນກາງ.
- ຕາຕະລາງກວດກາບົດສະເໜຂໍທຶນ.

2) **ການວາງແຜນ ແລະ ອະນຸມັດກຸ່ມ FGIF**:




## ຕາຕະລາງໜ້າທີ່ຮັບຜິດຊອບ ແລະ ຢັ້ງຢືນຄວາມຖືກຕ້ອງ ດ້ານປັດໃຈການຜະລິດກະສິກຳ

**ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ)**

**<u>ເອກະສານຄັດຕິດ 2.</u> ໜ້າທີ່ຮັບຜິດຊອບ ແລະ ການຢັ້ງຢືນຄວາມຖືກຕ້ອງ ດ້ານປັດໃຈການຜະລິດ**

ບ້ານ:........................ເມືອງ........................ແຂວງ..........................................................

| No. | ທີມງານຈັດຕັ້ງປະຕິບັດ | ວາລະການເອກະສານທີ່ຈະໄດ້ກວດກາ | ຜູ້ຮັບຜິດຊອບ | ຊື່ແລະນາມສະກຸນ | ລາຍເຊັນ |
|---|---|---|---|---|---|
| I | ທີມງານຈັດຕັ້ງປະຕິບັດ ຂັ້ນເມືອງ | 1. ເອກະສານສ້າງຕັ້ງກຸ່ມ ແລະ ລະບຽບບັນຊີການເງິນກຸ່ມຜະລິດ | ພະນັກງານກຸ່ມບ້ານ | | |
| | | 2. ນາຄຖານ-ເງື່ອນໄຂ ຜູ້ທີ່ຈະເປັນສະມາຊິກກຸ່ມ | ພະງານຕິດຕາມ ແລະ ປະເມີນຜົນ | | |
| | | 3. ຂຽນບົດສະເໜີຂໍທຶນຕາມແບບຟອມ | ພະນັກງານ ສົ່ງເສີມຂອງໂຄງການ | | |
| | | 4. ໜ້າປົກ ແລະ ສາລະບານ | | | |
| | | 5. ການສັງລວມເປັນພາສາລາວ ແລະ ພາສາອັງກິດ | | | |
| | | 6. (ຂໍ້ I) ຂໍ້ມູນກຸ່ມຜະລິດ | | | |
| | | 7. (ຂໍ້ II) ເນື້ອໃນການອະທິບາຍໂຄງການໂດຍຫຍໍ້ | | | |
| | | 8. (ຂໍ້ III) ບັນຊີລາຍຊື່ສະມາຊິກກຸ່ມ ຜູ້ສະໜັກຂໍທຶນ ສຳລັບການຜະລິດກະສິກຳ | | | |
| | | 9. ຂໍ້ IV: ສັງລວມອຸປະກອນ, ວັດສະດຸ, ການບໍລິການ ແລະ ຄ່າໃຊ້ຈ່າຍທີ່ຈຳເປັນສຳລັບກິດຈະກຳ. | | | |
| | | 10. ຂໍ້ V: ໄລຍະເວລາ ໃນການປະຕິບັດວຽກງານດ້ານການຜະລິດກະສິກຳ | | | |
| | | 11. ຂໍ້ VI: ການປະຕິບັດແຜນການຜະລິດ | | | |
| | | 12. ຂໍ້ VII: ການຝຶກອົບຮົມທ່າແຮງທີ່ຈຳເປັນ | | | |
| | | 13. ຂໍ້ XIII: ລາຍເຊັນຢັ້ງຢືນ | | | |
| | | 14. ຂໍ້ X: ຂໍ້ຕົກລົງຂອງສະມະຊິກກຸ່ມການຜະລິດ ທີ່ສະໜັກຂໍທຶນປັດໃຈການຜະລິດກະສິກຳ | | | |
| | | 15. ພາກທີ II: ການໄລ່ລຽງເສດຖະກິດ ການລົງທຶນຂອງກຸ່ມຊາວກະສິກອນ(6ຕາຕະລາງ) | | | |
| II | ທີມງານຈັດຕັ້ງປະຕິບັດ ຂັ້ນແຂວງ | 16. ກວດກາ ແບບຟອມບົດສະເໜີຂໍທຶນ, ກວດກາກົດເກນ ແລະ ຫຼັກໄວຍາກອນ, ກວດກາບົດຄັດຫຍໍ້ ພາສາລາວ ແລະ ພາສາອັງກິດ ແລະ ລວມທັງເອກະສານສ້າງຕັ້ງກຸ່ມ | ຂ່ຽວຊານການລົງທຶນກຸ່ມຜະລິດຂັ້ນແຂວງ | | |
| | | 17. ກວດກາຄວາມສອດຄ່ອງລະຫວ່າງດ້ານກະສິກຳ ແລະ ໂຄງລ່າງ ເພື່ອຮັບປະກັນວ່າເປັນໄປຕາມເປົ້າໝາຍຂອງໂຄງການ. | | | |
| | | 18. ກວດຄືນໂດຍລວມ ຂໍ້ II, ຂໍ້ IV; ຂໍ້ V ແລະ ຂໍ້ VI ໃນບົດສະເໜີຂໍທຶນ | | | |
| | | 19. ກວດຄືນ ພາກ II ການໄລ່ລຽງເສດຖະກິດ | | | |
| | | 20. ກວດກາຄືນ ຂໍ້ XIII: ລາຍເຊັນຢັ້ງຢືນ | | | |
| III | ທີມງານຈັດຕັ້ງປະຕິບັດຂັ້ນສູນກາງ | 21. ກວດກາເນື້ອໃນໂດຍລວມວ່າເປັນໄປຕາມເປົ້າໝາຍຂອງໂຄງການ ແລະ ຄູ່ມືການລົງທຶນ | ຊ່ຽວຊານ ການລົງທຶນ ແລະ ສົ່ງເສີມກະສິກຳ | | |
| | | 22. ຄວາມສອດຄ່ອງລະຫວ່າງໂຄງລ່າງພື້ນຖານ ແລະ ດ້ານປັດໃຈການຜະລິດ. | | | |
| | | 23. ກວດ ຂໍ້ IV: ສັງລວມອຸປະກອນ, ວັດສະດຸ, ການບໍລິການ ແລະ ຄ່າໃຊ້ຈ່າຍທີ່ຈຳເປັນ | | | |
| | | 24. ກວດ ພາກທີ II: ການໄລ່ລຽງເສດຖະກິດ ວ່າເໝາະສົມຕໍ່ການລົງທຶນຫຼືບໍ່ | | | |
| | | 25. ການຜະລິດສອດຄ່ອງກັບການຕະຫລາດບໍ່? | | | |
| | | 26. ຂໍ້ IX: ຄຳເຫັນຂອງໂຄງການຕໍ່ບົດສະເໜີການລົງທຶນດ້ານປັດໃຈການຜະລິດຂອງກຸ່ມຊາວກະສິກອນ. | | | |
| | | 27. ປັບປຸງຄັ້ງສຸດເພື່ອສັງລວມອະນຸມັດ | | | |

## VI. ການເຊັນສັນຍາສະໜອງທຶນ ລະຫວ່າງກຸ່ມຜະລິດ ແລະ ຄະນະພັດທະນາເສດຖະກິດ-ສັງຄົມເມືອງ

- ກະກຽມຮ່າງສັນຍາພາສາລາວ ແລະ ພາສາອັງກິດ 2-3 ຊຸດ/ກຸ່ມ
- ການລົງປະຊຸມຮ່ວມສະມາຊິກກຸ່ມກ່ຽວກັບສັນຍາ, ເງື່ອນໄຂສັນຍາ ແລະ ລວມທັງວິທີການປະຕິບັດ.
- ການຈັດພິທີເຊັນສັນຍາກຸ່ມຜະລິດ ແລະ ຄະນະພັດທະນາເສດຖະກິດ-ສັງຄົມເມືອງ ໂດຍມີ ຜູ້ເຂົ້າຮ່ວມເຊັ່ນ: (1) ນາຍບ້ານ 1 ທ່ານ; (2) ຫົວໜ້າກຸ່ມ ແລະ ຄະນະກຸ່ມ 3 ທ່ານ, ຍິງ 2 ທ່ານ, (3) ທ່ານ ຮອງເຈົ້າເມືອງຜູ້ຊີ້ນຳ ໂຄງການ; (4) ຫ້ອງການອ້ອມຂ້າງຂັ້ນເມືອງ; (5) ທີມງານຂັ້ນເມືອງ ແລະ ໂຄງການຂັ້ນແຂວງ 2-3 ທ່ານ.

## VII. ຂັ້ນຕອນການເບີກຈ່າຍດ້ານງົບປະມານ

ຂັ້ນຕອນໃນການເບີກຈ່າຍ ຫລື ໂອນທຶນໃຫ້ແກ່ກຸ່ມຜະລິດທີ່ໄດ້ຮັບການອະນຸມັດ ແລະ ສຳເລັດການເຊັນສັນຍາ ລະຫວ່າງກຸ່ມຜະລິດ ແລະ ຄະນະພັດທະນາເຖດຖະກິດ-ສັງຄົມເມືອງ, ໂຄງການ ຊກຂ ຂັ້ນສູນກາງຈະໂອນທຶນເຂົ້າ ບັນຊີກຸ່ມຜະລິດໂດຍກົງ ໂດຍອີງຕາມຈຳນວນທຶນຕາມແຜນການລົງທຶນຂອງກຸ່ມ, ເຊິ່ງມີຂັ້ນຕອນໃນການຈັດຕັ້ງ ປະຕິບັດຄື:




## VIII. ຝຶກອົບຮົມການຈັດຕັ້ງປະຕິບັດ.

ການຝຶກອົບຮົມກ່ຽວກັບການຈັດຕັ້ງປະຕິບັດໂຄງການແມ່ນດຳເນີນການຝຶກອົບຮົມດ້ວຍ 2 ຂັ້ນຕອນຄື:
**ຂັ້ນຕອນທີ 1** : ທີມງານຂັ້ນສູນກາງຝຶກອົບຮົມໃຫ້ແກ່ທີມງານຂັ້ນເມືອງ ແລະ ຂັ້ນແຂວງ;
**ຂັ້ນຕອນທີ 2**: ທີມງານຂັ້ນເມືອງ ແລະ ແຂວງ ຝຶກອົບຮົມໃຫ້ແກ່ກຸ່ມຜະລິດ ແລະ ຄອບຄົວທີ່ສົນໃຈພາຍໃນບ້ານ, ເຊິ່ງການຝຶກອົບຮົມດັ່ງກ່າວແມ່ນກວມເອົາຫົວຂໍ້ທີ່ສຳຄັນຄື:

1. ການຄຸ້ມຄອງການເງິນ(ລະບຽບການນຳໃຊ້ເງິນຂອງກຸ່ມ; ການບັນທຶກລາຍຮັບ-ລາຍຈ່າຍ; ການເກັບ ກຳໃບບິນ ຕ່າງໆ, ການສະຫລຸບລາຍຈ່າຍ ພາຍຫລັງສຳເລັດການປະຕິບັດກິດຈະກຳ).
2. ການຈັດຊື້ ກ່ຽວກັບການຈັດຊື້ປັດໃຈການຜະລິດ.
3. ເຕັກນິກດ້ານກະສິກຳ(ການປູກ-ການລ້ຽງ), ການປຸງແຕ່ງຜົນຜະລິດເບື້ອງຕົ້ນ ແລະ ການຕະຫລາດ.
4. ການປະຕິບັດຫລັງການເກັບກ່ຽວ.

**ໝາຍເຫດ:** ສຳລັບໄລຍະເວລາໃນການຝຶກອົບຮົມແຕ່ລະຫົວຂໍ້ຈະບໍ່ໄດ້ມີການຝຶກທັງໝົດທຸກຫົວຂໍ້ພ້ອມກັນ, ຈະຝຶກໄປຕາມຊ່ວງເວລາປະຕິບັດກິດຈະກຳຕົວຈິງ.

## IX. ການຈັດຕັ້ງປະຕິບັດ

### 1. ການຈັດຊື້

- ການຈັດຊື້ແມ່ນດຳເນີນການຈັດຊື້ໂດຍກຸ່ມຜະລິດ(ທີມງານຂັ້ນເມືອງ ຫລື ພາກສ່ວນທີ່ກ່ຽວຂ້ອງແມ່ນໃຫ້ການສະໜັບສະໜູນ ແຕ່ບໍ່ໃຫ້ເຮັດແທນເດັດຂາດ)
- ກຸ່ມຜະລິດວາງແຜນການຈັດຊື້ຮ່ວມກັນ
- ດຳເນີນການຈັດຊື້ໂດຍປະຕິບັດຕາມລະບຽບການຈັດຊື້ ຢ່າງເຂັ້ມງວດ.
- ເຮັດສັນຍາສະໜອງສິນຄ້າ ລະຫວ່າງກຸ່ມຜະລິດ ແລະ ຜູ້ສະໜອງ.
- ການຈັດສົ່ງປັດໃຈການຜະລິດ, ອຸປະກອນ ແລະ ເຄື່ອງມືຕ່າງໆ.
- ກວດກາຄຸນະພາບປັດໃຈການຜະລິດ, ອຸປະກອນ ແລະ ເຄື່ອງມືຕ່າງໆ ໃຫ້ຖືກຕ້ອງຕາມສັນຍາ.
- ການມອບຮັບປັດໃຈການຜະລິດ, ເຄື່ອງມື ແລະ ອຸປະກອນສຳລັບການຜະລິດ.

### 2. ການຈັດຕັ້ງປະຕິບັດ

- ວາງແຜນການຈັດຕັ້ງປະຕິບັດຮ່ວມກັນ ໂດຍກຸ່ມຜະລິດເປັນເຈົ້າການໃນການຈັດຕັ້ງປະຕິບັດ, ສ່ວນທີມງານຈັດຕັ້ງປະຕິບັດຂັ້ນເມືອງເປັນຜູ້ສະໜັບສະໜູນທາງດ້ານເຕັກວິຊາການ ໂດຍການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມ.
- ປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ
- ການກະກຽມການປະກອບສ່ວນ
- ດຳເນີນການຈັດຕັ້ງປະຕິບັດຕາມແຜນການລົງທຶນຂອງກຸ່ມຜະລິດ.
- ມອບຮັບໂຄງການທີ່ສຳເລັດແລ້ວ.
- ອົບຮົມການຄຸ້ມຄອງນຳໃຊ້

## X. ການຕິດຕາມ-ປະເມີນຜົນ ແລະ ສະຫລຸບ

### 1. ການຕິດຕາມ

- ຕິດຕາມການຈັດຕັ້ງປະຕິບັດ ແລະ ໃຫ້ຄຳແນະນຳທາງດ້ານເຕັກນິກ.
- ຂຽນບົດລາຍງານຄວາມຄືບໜ້າ, ບັນຫາ-ຂໍ້ຫຍຸ້ງຍາກ ແລະ ວິທີການແກ້ໄຂ.
- ຕິດຕາມການເກັບກ່ຽວຜົນຜະລິດ ລວມທັງລາຍຮັບຂອງສະມາຊິກປະຈຳເດືອນ.

### 2. ການກວດກາ ແລະ ການສຳລະຄ່າປັດໃຈການຜະລິດ ແລະ ການກໍ່ສ້າງ ແລະ ສ້ອມແປງ

ພາຍຫລັງທີ່ໂຄງການສຳເລັດແລ້ວ ກໍ່ທຳການ ສຳລະຄ່າກໍ່ສ້າງ ແລະ ສ້ອມແປງໂຄງລ່າງ ແລະ ປັດໃຈການຜະລິດໂດຍປະຕິບັດຕາມຂັ້ນຕອນຄື:

- ຜູ້ສະໜອງສະເໜີຂໍກວດກາວຽກຕາມສັນຍາ
- ເຈົ້າຂອງໂຄງການ(ກຸ່ມຜະລິດ) ເຊີນຄະນະຮັບຜິດຊອບທີ່ກ່ຽວຂ້ອງເຂົ້າຮ່ວມໃນການກວດກາ
- ດຳເນີນການກວດກາ ແລະ ມອບຮັບ(ສະເໜີແບບຟອມການກວດກາ 100%)
- ພາຍຫລັງທີ່ກວດກາສຳເລັດ ຜູ້ສະໜອງສະເໜີຂໍໂອນເງິນຄ່າການກໍ່ສ້າງຕາມສັນຍາ
- ເຈົ້າຂອງໂຄງການໂອນເງິນຕາມສັນຍາ(ໂດຍປະຕິບັດຕາມລະບຽບການເງິນ)

- ຜູ້ຮັບເໝົາເຮັດໃບຮັບເງິນ

ໝາຍເຫດ: ກໍລະນີທີ່ກຸ່ມຜະລິດຈັດຊື້ເອງແມ່ນໃຫ້ປະຕິບັດຕາມລະບຽບການຈັດຊື້

### 3, ການສະຫລຸບ ແລະ ລາຍງານສໍາເລັດ

ພາຍຫລັງທີ່ມີການມອບຮັບ ແລະ ມີການສໍາລະຄ່າການກໍ່ສ້າງ ສ້ອມແປງ ແລະ ປັດໃຈການຜະລິດແລ້ວ ແມ່ນໃຫ້ດໍາເນີນການສະຫລຸບການຈັດຕັ້ງປະຕິບັດເຊັ່ນ:

- ສະຫລຸບຄ່າໃຊ້ຈ່າຍຂອງໂຄງການທັງໝົດ ໂຄງລ່າງ ແລະ ການຜະລິດ
- ເປີດກອງປະຊຸມເປີດເຜີຍ ແລະ ສະຫລຸບການໃຊ້ຈ່າຍ
- ຂຽນບົດລາຍງານສໍາເລັດໂຄງການລົງທຶນກຸ່ມຜະລິດ

## ເອກະສານຊ້ອນທ້າຍ

1. ແບບຟອມບົດບັນທຶກກອງປະຊຸມບ້ານ
2. ແບບຟອມບັນຊີລາຍຊື່ຂອງ
3. ແບບຟອມບົດສະເໜີຂໍທຶນປັດໃຈການຜະລິດ
4. ແບບຟອມຮ່າງສັນຍາລະຫວ່າງຄະນະເສດຖະກິດເມືອງ ແລະ ກຸ່ມຜະລິດ ພາສາລາວ
5. ແບບຟອມຮ່າງສັນຍາລະຫວ່າງຄະນະເສດຖະກິດເມືອງ ແລະ ກຸ່ມຜະລິດ ພາສາອັງກິດ
6. ແບບຟອມກວກກາ ແລະ ທົບທວນບົດສະເໜີ ປັດໃຈການຜະລິດ
7. ແບບຟອມຂຽນບົດລາຍງານສຳເລັດການລົງທຶນຂອງກຸ່ມຜະລິດ

## 1. ແບບຟອມ 1: ບົດບັນທຶກກອງປະຊຸມບ້ານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ............

ບ້ານ .............

# ບົດບັນທຶກ

## ກອງປະຊຸມ ກ່ຽວກັບ ການຄັດເລືອກບຸລິມະສິດຂອງກຸ່ມກຸ່ມຜະລິດ

ກອງປະຊຸມ ກ່ຽວກັບການລັດເລືອກກິດຈະກຳທີ່ເປັນບຸລິມະສິດ ຂອງກຸ່ມຜະລິດ ໄດ້ຈັດຂຶ້ນໃນວັນທີ.............. ເປັນເວລາ.......ວັນ, ຢູ່ທີ່......................ພາຍໃຕ້ການເປັນປະທານຂອງທ່ານ............................................ ແລະ ມີຜູ້ເຂົ້າຮ່ວມທັງໝົດຈຳນວນ.......... ຄົນ, ຍິງ................ຄົນ, ຄອບຄົວໄວໜຸ່ມ................ຄອບຄົວ (ບັນຊີລາຍຊື່ຄັດຕິດມາພ້ອມນີ້). ຜ່ານການດຳເນີນກອງປະຊຸມປຶກສາຫາລື ແລະ ປະກອບຄຳເຫັນ ແມ່ນໄດ້ຕົກລົງເຫັນດີເປັນເອກະພາບກັນ ດັ່ງໃນເນື້ອໃນຂ້າງລຸ່ມນີ້:

1. ຮັບຮອງເອົານະໂຍບາຍ ແລະ ເງື່ອນໄຂ ຂອງທຶນຊ່ວຍເຫລືອກຸ່ມຜະລິດຮອບທີສອງ(2) ພາຍໃຕ້ການສະໜັບສະໜູນຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
2. ຮັບຮອງເອົາຜົນຂອງການປຶກສາຫາລື ແລະ ຄັດເລືອກກິດຈະກຳທີ່ເປັນບຸລິມະສິດຂອງກຸ່ມຜະລິດຄື ເຊິ່ງປະກອບມີລາຍລະອຽດດັ່ງລຸ່ມນີ້:
   1)...........................................................................................................................
   2)...........................................................................................................................
   3)...........................................................................................................................
3. ຮັບຮອງເອົາສະມາຊິກເພີ້ມຂຶ້ນຈຳນວນ..............ຄອບຄົວ, ໃນນັ້ນມີຄອບຄົວທຸກຍາກ...........ຄດ, ປານກາງງ........ຄຄ, ຮັ່ງມີ.................ຄຄ, ຜູ້ຍິງເປັນຫົວໜ້າຄອບຄົວ...........ຄຄ ແລະ ເປັນຊາວໜຸ່ມ ...........ຄຄ(ລາຍຊື່ລະອຽດແມ່ນລັດຕິດດ້ານຫລັງ)
4. ຮັບຮອງເອົາແຜນການເຄື່ອນໄຫວຂອງກຸ່ມ: ........................................................................................
   ...........................................................................................................................
5. ປຶກສາຫາລືວຽກງານອື່ນໆ (ຖ້າມີ) ........................................................................................

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ ໄວ້ເປັນຫຼັກຖານ.

ທີ່...................., ວັນທີ ....................

**ປະທານກອງປະຊຸມ** **ຜູ້ບັນທຶກ**

## 2. ແບບຟອມ 2: ບັນຊີລາຍຊື່ຂອງສະມາຊິກ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ: ................

ເມືອງ: ................

ບ້ານ: .................

### ບັນຊີລາຍຊື່ຜູ້ສະໝັກເຂົ້າເປັນສະມາຊິກກຸ່ມຜະລິດ............................

| ລ/ດ | ຊື່ ແລະ ນາມສະກຸນ | ອາຍຸ | ອາຊີບ | ທີ່ຢູ່ ປະຈຸບັນ | ສຳມະໂນ ຄົວ ເລກທີ | ຈຳນວນ ສັດ (ໂຕ) | ຈຳນວນ ເນື້ອທີ່(ເຮັກຕາ) | ຖານະຄຄ | ເບີ ໂທລະສັບ | ລາຍເຊັນ ຫລື ຈ້ຳໂປ້ |
|---|---|---|---|---|---|---|---|---|---|---|
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |
| 5 | | | | | | | | | | |
| 6 | | | | | | | | | | |
| 7 | | | | | | | | | | |
| 8 | | | | | | | | | | |
| 9 | | | | | | | | | | |
| 10 | | | | | | | | | | |
| 11 | | | | | | | | | | |
| 12 | | | | | | | | | | |
| 13 | | | | | | | | | | |
| 14 | | | | | | | | | | |
| 15 | | | | | | | | | | |
| 16 | | | | | | | | | | |
| 17 | | | | | | | | | | |
| 18 | | | | | | | | | | |
| 19 | | | | | | | | | | |
| 20 | | | | | | | | | | |
| ລວມ: | | | | | | | | | | |